ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ ເລກທີ 116/ຫກ

ນະຄອນຫຼວງວຽງຈັນ, ວັນທີ 11 ພຶດສະພາ 2023

# ແຈ້ງການ

## ຈຳໜ່າຍພັນທະບັດ ທະນາຄານແຫ່ງ ສປປ ລາວ ສະກຸນເງິນກີບ ງວດທີ 2 (ຄັ້ງທີ 3)

ຫ້ອງການ ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເພື່ອປະກອບສ່ວນໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ, ທະນາຄານແຫ່ງ ສປປ ລາວ ໄດ້ຈັດຕັ້ງປະຕິບັດນະໂຍບາຍເງິນຕາ ດ້ວຍການສືບຕໍ່ອອກຈຳໜ່າຍພັນທະບັດ ທຫລ ສະກຸນເງິນກີບ ງວດທີ 2 (ຄັ້ງທີ 3), ດັ່ງລາຍລະອຽດລຸ່ມນີ້:

1. **ຄຸນລັກສະນະພັນທະບັດ ທຫລ ສະກຸນເງິນກີບ ງວດທີ 2 (ຄັ້ງທີ 3) ທີ່ອອກຈຳໜ່າຍໃຫ້ແກ່ມວນຊົນ**
   - **ພັນທະບັດທີ່ອອກຈຳໜ່າຍ:** ມູນຄ່າທັງໝົດ 2.000.000.000.000 ກີບ (ສອງພັນຕື້ກີບ); ອາຍຸພັນທະບັດ 6 ເດືອນ; ອັດຕາດອກເບ້ຍ 15% ຕໍ່ປີ; ຊຳລະດອກເບ້ຍຄັ້ງດຽວເມື່ອຄົບກຳນົດໄຖ່ຖອນ; ບໍ່ສາມາດປ່ຽນມືໄດ້; ສັ່ງຈອງ ບໍ່ເກີນ 500.000.000 ກີບ (ຫ້າຮ້ອຍລ້ານກີບ) ຕໍ່ລາຍບຸກຄົນ ຫຼື ນິຕິບຸກຄົນ.
   - **ຮູບແບບພັນທະບັດ:** ພັນທະບັດຮູບແບບເອເລັກໂຕຣນິກ ບໍ່ມີໃບພັນທະບັດເປັນເຈ້ຍ ແຕ່ຈະມີການອອກໜັງສືຢັ້ງຢືນການຖືຄອງພັນທະບັດໃຫ້ແກ່ເຈົ້າຂອງພັນທະບັດ.

2. **ເງື່ອນໄຂຂອງຜູ້ທີ່ສາມາດຊື້ພັນທະບັດ:** ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຖິ່ນຖານຢູ່ ສປປ ລາວ (ຍົກເວັ້ນ ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ).

3. **ການສັ່ງຈອງພັນທະບັດ**

ຜູ້ທີ່ມີເງື່ອນໄຂ ແລະ ມີຄວາມສົນໃຈຈະຊື້ພັນທະບັດ ທຫລ ສະກຸນເງິນກີບ ແມ່ນສາມາດສັ່ງຈອງ **ໃນລະຫວ່າງວັນທີ 15-17 ພຶດສະພາ 2023** ຜ່ານການສັ່ງຈອງກັບທະນາຄານທຸລະກິດ ທີ່ເປັນຕົວແທນຈຳໜ່າຍ 7 ແຫ່ງ, ດັ່ງລາຍຊື່ລຸ່ມນີ້:

1. ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL);
2. ທະນາຄານ ພັດທະນາລາວ ຈຳກັດ (LDB);
3. ທະນາຄານ ສົ່ງເສີມກະສິກຳ ຈຳກັດ (APB);
4. ທະນາຄານ ຮ່ວມທຸລະກິດລາວ-ຫວຽດ ຈຳກັດ (LVB);
5. ທະນາຄານ ຮ່ວມພັດທະນາ (JDB);
6. ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ (ICBC);
7. ທະນາຄານ ບີໄອຊີ ລາວ ຈຳກັດ (BIC).



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

## 4. ການຈັດສັນພັນທະບັດ

ເນື່ອງຈາກວ່າພັນທະບັດ ທະນາຄານແຫ່ງ ສປປ ລາວ ທີ່ອອກຈຳໜ່າຍໃນງວດນີ້ ມີຈຳນວນຈຳກັດ, ທະນາຄານແຫ່ງ ສປປ ລາວ ຈະເປັນຜູ້ຈັດສັນຕາມມູນຄ່າຈຳໜ່າຍຕົວຈິງ ແລະ ມູນຄ່າການສັ່ງຈອງທັງໝົດ ໃຫ້ຜູ້ສັ່ງຈອງຕາມລາຍຊື່ທີ່ສັ່ງຈອງກັບທະນາຄານຕົວແທນຈຳໜ່າຍ ເພື່ອຄວາມເປັນເອກະພາບກັນ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານ ເພື່ອຊາບຕາມທາງຄວນດ້ວຍ.

**ຫົວໜ້າຫ້ອງການ**

ເພັດສະຖາພອນ ແກ້ວວົງວິຈິດ

*ປະຊາສຳພັນ: ຫ້ອງການ ທະນາຄານແຫ່ງ ສປປ ລາວ

ໂທລະສັບ: 020-29555521 ແລະ 020-23654449.